**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

# ບົດລາຍງານ

**ການລົງເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ສຳລັບ ໂຄງການເຂື່ອນໄຟຟ້າເຊ ຂະໜານ 1 - ຊານໄຊ, ເມືອງຊານໄຊ ແຂວງອັດຕະປື**

**ຄັ້ງວັນທີ 01-06 ເມສາ 2018**



**ເມສາ 2018**

**1.10 ຜົນກະທົບດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂດຍຫຍໍ້:**

❖ <u>ເຂດເໜືອເຂື່ອນ:</u>

<u>ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ:</u>

- ນໍ້າຖ້ວມເນື້ອທີ່ປ່າໄມ້ຈຳນວນ 14,980 ຮຕ, ໃນນັ້ນ 6,368 ຮຕ ເປັນເນື້ອທີ່ປ່າທຳມະຊາດ ທັງເປັນບ່ອນຢູ່ອາໃສຂອງສັດປ່າ ໃນເຂດປ່າສະຫງວນດົງອຳພຳ 1 ເຊິ່ງເປັນໜຶ່ງໃນປ່າສະຫງວນແຫ່ງຊາດ.

<u>ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ:</u>

- ໄດ້ມີການຍົກຍ້າຍ 3 ໝູ່ບ້ານ, 163 ຄອບຄົວ, 815 ຄົນ ( ບ້ານດາກບູ, ບ້ານສຸກສະຫວ່າງ, ບ້ານຕັງກຶ);
- ສິ່ງຜົນກະທົບຕໍ່ເນື້ອທີ່ດິນກະສິກຳ 407 ຮຕ (ບ້ານດາກເສົາ 50 ຮຕ, ບ້ານດາກບູ 148,5 ຮຕ, ບ້ານສຸກສະຫວ່າງ 160,5 ຮຕ, ບ້ານດາກກຶ 8 ຮຕ, ບ້ານຄອນນາໃຫຍ່ 2 ຮຕ ແລະ ບ້ານຕັງກຶ 38.1 ຮຕ).

❖ <u>ເຂດລຸ່ມເຂື່ອນ:</u>

<u>ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ:</u>

- ສິ່ງຜົນກະທົບຕໍ່ຊະນິດພັນປາ ແລະ ການເຄື່ອນຍ້າຍຂອງປາໃນເຂດລຸ່ມເຂື່ອນ ຫາ ເຂດເໜືອເຂື່ອນ ປະມານ 80% ແລະ ສິ່ງຜົນກະທົບຕໍ່ປະຊາຊົນຕາມສາຍນໍ້າເຊຂະໜານເຂດລຸ່ມ ເນື່ອງຈາກມີການປ່ຽນແປງການໄຫຼຂອງນໍ້າ;
- ສິ່ງຜົນກະທົບຕໍ່ເນື້ອທີ່ປ່າໄມ້ທຳມະຊາດຈຳນວນ 339 ຮຕ ເນື່ອງຈາກມີການບຸກເບີກການກໍ່ສ້າງແຄ້ມພັກກຳມະກອນ , ການກໍ່ສ້າງເສັ້ນທາງ ແລະ ການກໍ່ສ້າງສິ່ງອຳນວຍຄວາມສະດວກອື່ນໆ.

<u>ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ:</u>

- ສິ່ງຜົນກະທົບຕໍ່ເນື້ອທີ່ດິນກະສິກຳຂອງປະຊາຊົນຈຳນວນ 84,8 ຮຕ, ໃນນັ້ນ ມີເນື້ອທີ່ດິນນາຂອງປະຊາຊົນບ້ານຫີນຕຳ ແລະ ບ້ານດອນແຄນ ຈຳນວນ 45 ຮຕ ແລະ ດິນໄຮ່ຂອງປະຊາຊົນບ້ານສົມບູນ, ບ້ານມີໄຊ ແລະ ບ້ານພູແດງ.

**1.11 ຂະບວນການຮັບຮອງເອກະສານ**

| | |
|---|---|
| ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຮັບຮອງບົດລາຍງານ EIA | ສະບັບເລກທີ 075/ສນຍ.ອຊນສ;<br>ລົງວັນທີ 14 ມັງກອນ 2008 |
| ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຮັບຮອງບົດລາຍງານ EMP | ສະບັບເລກທີ 070/ສນຍ.ອຊນສ;<br>ລົງວັນທີ 14 ມັງກອນ 2008 |
| ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຮັບຮອງບົດລາຍງານ EMP ສະບັບປັບປຸງ | ສະບັບເລກທີ 080/ສນຍ.ອຊນສ;<br>ລົງວັນທີ 23 ມັງກອນ 2009 |
| (ຕໍ່)ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມສັງຄົມ SIA | ສະບັບເລກທີ 0505/ກຊສ;<br>ວັນທີ 31/01/2012 |
| (ຕໍ່) ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມທຳມະຊາດEIA | ສະບັບເລກທີ 0506/ກຊສ;<br>ວັນທີ 31/01/2012 |
| ຮັບຮອງເອົາ ແຜນການຄຸ້ມຄອງ ແລະ ການອະນາໄມຊືອະມອນສານອອກຈາກອ່າງເກັບນໍ້າ | ສະບັບເລກທີ 0788/ກຊສ;<br>ວັນທີ 16/05/2014. |
| ເອກະສານຊ້ອນທ້າຍ (Schedule 2) | ເອກະສານຊ້ອນທ້າຍ ວ່າດ້ວຍ ພັນທະທາງດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການເຂື່ອນໄຟຟ້າ ເຊຂະໜານ 1 ສະບັບເລກທີ 0479/ອຊນສ.ກປສສ; ລົງວັນທີ 26 ເມສາ 2011. |

**ຄວາມຄືບໜ້າຂອງໂຄງການ (ໄຕມາດ 4 ປີ 2017)**

I. ຄວາມຄືບໜ້າ

- ສໍາເລັດ ການຮັບຮອງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ສໍາລັບ ໂຄງການແລວສາຍສົ່ງໄຟຟ້າຂະໜາດ 230 ກວ ຈາກເຮືອນຈັກເຂື່ອນໄຟຟ້າເຊຂະໜານ 1 ຫາຊາຍແດນລາວ-ຫວຽດນາມ;
- ສໍາເລັດ ການຮັບຮອງເອົາບົດລາຍງານການສຶກສາຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນ ຂອງໂຄງການແລວສາຍສົ່ງໄຟ ຟ້າຂະໜາດ 115 ກວ ຈາກເຮືອນຈັກເຂື່ອນໄຟຟ້າເຊຂະໜານ ຊານໄຊ ໄປເຮືອນຈັກເຂື່ອນໄຟຟ້າເຊຂະໜານ 1;
- ສໍາເລັດ ການອະນາໄມອ່າງເກັບນໍ້າຂອງໂຄງການເຂື່ອນໄຟຟ້າເຊຂະໜານ ຊານໄຊ.

I. ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສິ່ງແວດລ້ອມ

1. ດ້ານສິ່ງແວດລ້ອມ

- ການຄຸ້ມຄອງ ແລະ ຈັດຂີ້ເຫຍື້ອ: ຈັດແບ່ງ ແລະ ແຍກປະເພດ ຂີ້ເຫຍື້ອ ຄື: ຂີ້ເຫຍື້ອໃຊ້ປະຈໍາວັນແມ່ນຈະຂຸມຝັງ, ຂີ້ເຫຍື້ອອັນຕະລາຍແມ່ນຈະໄດ້ຂົນສົ່ງໄປສາງເກັບຂີ້ເຫຍື້ອເທິງພາກສະໜາມ, ຂີ້ເຫຍື້ອສາມາດນໍາກັບມາໃຊ້ຄືນໄດ້ແມ່ນຈະໄດ້ໂຮມໄວ້;
- ວຽກງ່ານຄຸ້ມຄອງຄຸນນະພາບອາກາດ: ການນໍາໃຊ້ພາຫະນະເວລາຂົນສົ່ງ ຕ້ອງມີຜ້າປົກຫຸ້ມ, ກໍານົດຄວາມໄວຂອງລົດ,ການທົດນໍ້າສະກັ້ນຂີ້ຝຸ່ນ ແລະ ມີການສ້ອມແປງເສັ້ນທາງທີ່ເປເພເປັກປົກກະຕິ;
- ການຟື້ນຟູສິ່ງແວດລ້ອມໃນເຂດກໍ່ສ້າງຂອງໂຄງການ ເປັນຕົ້ນ: ສະຖານທີ່ຖິ້ມຂີ້ເຫຍື້ອ, ເຂດແຄ້ມພັກພະນັກງານ ໄດ້ມີການປູກປ່າ, ປູກຫຍ້າ ແລະ ມີມາດຕະການປ້ອງກັນບໍ່ໃຫ້ມີການຂຸດຄົ້ນໄມ້ ແລະ ຈູດປ່າຊະຊາຍ;
- ວຽກງານຄຸ້ມຄອງສຽງ: ໄດ້ມີການປ່ຽນເຕັກໂນໂລຊີເຄື່ອງຈັກ, ສ້ອມແປງຮັກສາລົດ, ກົນຈັກ ແລະ ອຸປະກອນອື່ນໆ ໃຫ້ຖືກຕ້ອງຂອງມາດຕະການຢ່າງປົກກະຕິ.

2. ດ້ານສັງຄົມ (ບ້ານຍົກຍ້າຍ)

- ເຂດບ້ານສຸກສະຫວ່າງ-ດັກບູ: ສໍາເລັດການສ້ອມແປງເຮືອນທີ່ເປເພໃຫ້ປະຊາຊົນ. ການບຸກເບີກທີ່ດິນທໍາການຜະລິດໃຫ້ປະຊາຊົນເພື່ອ ປູກເຂົ້າ, ປູກສາລີ ແລະ ການສະໜອງເຂົ້າສານ ງວດ 4 ໃຫ້ແກ່ປະຊາຊົນ ພ້ອມທັງເບີກຈ່າຍເງິນອຸດໜູນໃຫ້ປະຊາຊົນບ້ານດັກບູ;
- ເຂດບ້ານຫ້ວຍດູມ: ສໍາເລັດ ຍົກຍ້າຍເຂດບ້ານຫີນດໍາໄປຢູ່ເຂດຈັດສັນຫ້ວຍດູມ, ສະໜອງເຂົ້າສານໃຫ້ແກ່ປະຊາຊົນບ້ານຫີນດໍາ ແລະ ສະໜັບສະໜູນການເຮັດພິທີກໍາການເຄື່ອນຍ້າຍປ່າຊ້າໃຫ້ແກ່ປະຊາຊົນບ້ານຫີນດໍາທີ່ຍົກຍ້າຍໄປໃນເຂດບ້ານຈັດສັນ. ປະຈຸບັນ ບໍລິສັດ ກໍາລັງກໍ່ສ້າງເຮືອນໃຫ້ປະຊາຊົນໃນເຂດບ້ານດອນແຄນ ຄາດໝາຍຈະໃຫ້ສໍາເລັດໃນປີ 2017 ແລະບ້ານຕັງເກົ ໃນເດືອນ 03/2018.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ 0324 /ກຊສ.ກຕຊສ

ນະຄອນຫຼວງວຽງຈັນ, ວັນທີ 30 ມີນາ 2018

ຮຽນ: ຫົວໜ້າ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງອັດຕະປື

ເລື່ອງ: ການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນໄລຍະດຳເນີນງານຂອງໂຄງການເຂື່ອນໄຟຟ້າເຊຊະໝານ 1 ຄັ້ງວັນທີ 31 ມີນາ ຫາ 05 ເມສາ 2018ທີ່ເມືອງຊານໄຊ ແຂວງອັດຕະປື

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 3169/ກຊສ, ລົງວັນທີ 01 ສິງຫາ 2017;
- ອີງຕາມ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຂອງໂຄງການເຂື່ອນໄຟຟ້າ ເຊຊະໝານ 1 ສະບັບເລກທີ 075/ສນຍ.ອຂນສ, ລົງວັນທີ 14 ມັງກອນ 2008;
- ອີງຕາມ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການເຂື່ອນໄຟຟ້າເຊຊະໝານ 1 ສະບັບເດືອນມັງກອນ 2009.

ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຕຊສ), ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ຂໍຖືເປັນກຽດສະເໜີມາຍັງທ່ານ ຊາບວ່າ: ກຕຊສ ໄດ້ກະກຽມແຜນການລົງເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນໄລຍະດຳເນີນງານ ຂອງໂຄງການເຂື່ອນໄຟຟ້າເຊຊະໝານ 1 ໃນລະຫວ່າງ ວັນທີ 31 ມີນາ ຫາ 05 ເມສາ 2018, ທີ່ເມືອງຊານໄຊ ແຂວງອັດຕະປື

ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຄງການດັ່ງກ່າວ ໄດ້ດຳເນີນໄປຢ່າງມີປະສິດທິຜົນ, ກຕຊສ ຈຶ່ງຂໍເຊີນພະນັກງານ ຕາງໜ້າພາກສ່ວນການຈັດຕັ້ງຂອງທ່ານ ຈຳນວນ 3 ທ່ານ ເຂົ້າຮ່ວມນຳຄະນະວິຊາການ ກຕຊສ ໃນການເຄື່ອນໄຫວວຽກງານການຕິດຕາມກວດກາສິ່ງແວດລ້ອມພາກສະໜາມຄັ້ງນີ້ ແລະ ເປັນເຈົ້າການປະສານສົມທົບ ແລະ ເຊື້ອເຊີນ ພະນັກງານຕາງໜ້າຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ຕາມລາຍຊື່ທີ່ໄດ້ຄັດຕິດມາພ້ອມນີ້. (ສຳລັບຕາຕະລາງເວລາການເຄື່ອນໄຫວລະອຽດ ແມ່ນມີໃນເອກະສານຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເພື່ອຊາບ ແລະ ໃຫ້ຄວາມຮ່ວມມື ຕາມທາງຄວນດ້ວຍ.

ຫົວໜ້າກອງ

ອາລຸນ ໄຊຍະວົງ

ລາຍລະອຽດກະລຸນາຕິດຕໍ່ພົວພັນ :

ທ່ານ ສຸລິດ ສະລິດທິລາດ ໂທ 020 97187779

ທ່ານ ວຽງວິໄລ ທຳມະລັງສີ ໂທ 020 23553965

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ

ກອງຕິດຕາມກວດກາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເລກທີ 0324 /ກຊສ.ກຕຊສ

ນະຄອນຫຼວງວຽງຈັນ, ວັນທີ 30 ມິ.ນາ. 2018

ເຖິງ : ທ່ານ ຜູ້ອໍານວຍການ ບໍລິສັດ ໄຟຟ້າເຊກະໝານ 1 ຈໍາກັດ

ເລື່ອງ : ການເຄື່ອນໄຫວຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ໃນໄລຍະດໍາເນີນງານ ຂອງໂຄງການເຂື່ອນໄຟຟ້າເຊຂະໝານ 1 ໃນລະຫວ່າງ ວັນທີ **31 ມີນາ ຫາ 05 ເມສາ 2018**

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກອງຕິດຕາມກວດກາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 3169/ກຊສ, ລົງວັນທີ 01 ສິງຫາ 2017;
- ອີງຕາມ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຂອງໂຄງການເຂື່ອນໄຟຟ້າ ເຊຂະໝານ 1 ສະບັບເລກທີ 075/ສນຍ.ອຂນສ, ລົງວັນທີ 14 ມັງກອນ 2008;
- ອີງຕາມ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການເຂື່ອນໄຟຟ້າເຊຂະໝານ 1 ສະບັບເດືອນມັງກອນ 2009.

ກອງຕິດຕາມກວດກາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (ກຕຊສ), ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (ກຊສ) ຂໍຖືເປັນກຽດສະເໜີມາຍັງທ່ານ ຊາບວ່າ: ກຕຊສ ໄດ້ກະກຽມແຜນການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ໃນໄລຍະດໍາເນີນງານ ຂອງໂຄງການເຂື່ອນໄຟຟ້າເຊຂະໝານ 1 ໃນລະຫວ່າງວັນທີ **31 ມີນາ ຫາ 05 ເມສາ 2018**

ເພື່ອຮັບປະກັນໃຫ້ການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມໂຄງການ ໃນພາກສະໜາມຄັ້ງນີ້ໄດ້ດໍາເນີນໄປຢ່າງມີປະສິດທິຜົນ, ກຕຊສ ຈຶ່ງສະເໜີມາຍັງທ່ານກະກຽມວິຊາການທີ່ກ່ຽວຂ້ອງ ເພື່ອນໍາສະເໜີການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ຂອງໂຄງການໃນໄລຍະຜ່ານມາ ພ້ອມທັງເຂົ້າຮ່ວມ ແລະ ອໍານວຍຄວາມສະດວກໃຫ້ແກ່ຄະນະວິຊາການ ກຕຊສ ໃນການເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດການຄຸ້ມຄອງສິ່ງແວດລ້ອມ ຂອງໂຄງການໃນພາກສະໜາມຄັ້ງນີ້ດ້ວຍ. ( ລາຍລະອຽດແຜນການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມໂຄງການ ແມ່ນມີໃນເອກະສານຄັດຕິດ).

ດັ່ງນັ້ນ, ຈຶ່ງໄດ້ສະເໜີມາຍັງທ່ານ ເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມື ຕາມທາງຄວນດ້ວຍ.

**ຫົວໜ້າກອງ**

ອາລຸນ ໄຊຍະວົງ


ລາຍລະອຽດກະລຸນາຕິດຕໍ່ພົວພັນ :

ທ່ານ ສຸລິດ ສະລິດທິລາດ ໂທ 020 97187779

ທ່ານ ວຽງວິໄລ ທໍາມະລັງສີ ໂທ 020 23553965

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ 0325 /ກຊສ.ກຕຊສ

ນະຄອນຫຼວງວຽງຈັນ, ວັນທີ 30.ມີນາ.2018

## ບັດເຊີນ

ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ຂໍຖືເປັນກຽດເຊີນ:

ທ່ານ:..........................................................................................................

..................................................................................................................

..................................................................................................................

ຈາກພາກສ່ວນ...............................................................................................

..................................................................................................................

ເພື່ອເຂົ້າຮ່ວມເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຄງການເຂື່ອນໄຟຟ້າເຊຊະໜານ 1 ໃນລະຫວ່າງວັນທີ 31 ມີນາ ຫາ 05 ເມສາ 2018, ທີ່ເມືອງຊານໄຊ ແຂວງອັດຕະປື (ລາຍລະອຽດໄດ້ຄັດຕິດພ້ອມນີ້).

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມ ຕາມການເຊື້ອເຊີນຄັ້ງນີ້ດ້ວຍ.

ຫົວໜ້າກອງ

ອາລຸນ ໄຊຍະວົງ

ໝາຍເຫດ:

- ສຳລັບ ອັດຕາກິນ ແລະ ພັກເຊົ່າ ແມ່ນ ກຕຊສ ຈະເປັນຜູ້ຮັບຜິດຊອບ ໂດຍອີງຕາມຂໍ້ກຳນົດຂອງກະຊວງ ການເງິນ;
- ຂຶ້ນລົດຢູ່ທີ່ ຕຶກກົມທີ່ດິນ ຢູ່ວຽງທອງ ເວລາ...............................
- ເບີຕິດຕໍ່ປະສານງານ ທ້າວ ສຸລິດ ລະລິດທິລາດ 020 97187779, ທ້າວ ວຽງວິໄລ ທຳມະລັງສີ 020 23553965

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 0337
ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ.........../ກຊສ.ກຕຊສ
ນະຄອນຫຼວງວຽງຈັນ, ວັນທີ 02 ເມສາ 2018

**ແຜນການເຄື່ອນໄຫວ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນພາກສະໜາມ ສຳລັບ ໂຄງການ ເຂື່ອນໄຟຟ້າ ເຊຂະໜານ 1 ໃນຊ່ວງໄລຍະດຳເນີນງານ ທີ່ເມືອງຊານໄຊ, ແຂວງອັດຕະປື ຄັ້ງໃນວັນທີ 31 ມີນາ ຫາ 5 ເມສາ 2018**

**1. ພາກສະເໜີ**

ໂຄງການເຂື່ອນໄຟຟ້າເຊຂະໜານ 1 ຕັ້ງຢູ່ເມືອງຊານໄຊ, ແຂວງອັດຕະປື, ມີເນື້ອທີ່ອ່າງເກັບນ້ຳທັງໝົດ 149.8 ກມ², ບໍລິມາດບັນຈຸຂອງອ່າງເກັບນ້ຳແມ່ນ 4,8 ຕື້ ມ³, ບໍລິມາດຮັບໃຊ້ການຜະລິດແມ່ນ 1,6 ຕື້ ມ³, ລະດັບສູງຂອງນ້ຳ 230 ມ ທຽບໃສ່ໜ້ານ້ຳທະເລປານກາງ, ລວງສູງຕົວເຂື່ອນ 115,5 ມ, ມີ 5 ປະຕູນ້ຳລົ້ນ, ອັດຕາການໄຫຼຂອງນ້ຳແມ່ນ 375.4 ມ³/ວິນາທີ, ມີກຳລັງຕິດຕັ້ງໄຟຟ້າທັງໝົດ 290 ເມກາວັດ ປະກອບມີ 2 ໜ່ວຍຈັກ. ໂຄງການດັ່ງກ່າວ ມີໄລຍະກໍ່ສ້າງ 5 ປີ ໃນນັ້ນລວມທັງການກໍ່ສ້າງສາຍສົ່ງໄຟຟ້າ 220 ກວ, ຍາວ 30 ກມ ເຊື່ອມຈາກໂຄງການ ຫາສະຖານີໄຟຟ້າ 500 ກວ ບ້ານໂຊກ. ນອກນັ້ນຍັງມີການກໍ່ສ້າງເສັ້ນທາງໃໝ່ ຈາກກິໂລແມັດທີ 52 ຖະໜົນເລກທີ 18B ເຂົ້າຫາເຂດໂຄງການ ເຊິ່ງມີຄວາມຍາວ 19 ກມ. ປະຈຸບັນໂຄງການດັ່ງກ່າວແມ່ນຢູ່ໃນຊ່ວງໄລຍະດຳເນີນງານ.

**2. ຈຸດປະສົງ**

- ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຂອງໂຄງການ ໃນພາກສະໜາມ ໃນການປະຕິບັດມາດຕະການຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ;
- ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດບັນດານິຕິກຳທີ່ກ່ຽວຂ້ອງກັບໂຄງການ ໃນການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ລວມທັງເອກະສານຊ້ອນທ້າຍຂອງສັນຍາສຳປະທານ ວ່າດ້ວຍ ພັນທະທາງດ້ານສິ່ງແວດ ລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການ.

**3. ຄາດຄະເນຜົນໄດ້ຮັບໃນການຕິດຕາມກວດກາ**

- ຮັບຮູ້ເຖິງສະພາບຄວາມຄືບໜ້າ ແລະ ຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ແລະ ການຟື້ນຟູສິ່ງແວດລ້ອມໃນເຂດພື້ນທີ່ ທີ່ໄດ້ກໍ່ສ້າງສຳເລັດ ທີ່ເຫັນວ່າໄດ້ຮັບຜົນກະທົບຈາກການກໍ່ສ້າງໂຄງການເຂື່ອນໄຟຟ້າ ເຊຂະໜານ 1;
- ການປະຕິບັດມາດຕະການຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ຕາມທີ່ກຳນົດໄວ້ໃນ ຜຄຕສ, ບັນດາເງື່ອນໄຂທີ່ກຳນົດໄວ້ໃນໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ, ພັນທະທາງດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍຂອງສັນຍາສຳປະທານໂຄງການ.

4. ຕາຕະລາງເວລາ ການເຄື່ອນໄຫວຕິດຕາມກວດກາ

| ວັນ ແລະ ເວລາ | ລາຍລະອຽດ | ໝາຍເຫດ |
|---|---|---|
| 31 ມີນາ 2018 | ມື້ທີ 1 | |
| | ເດີນທາງຈາກ ນະຄອນຫຼວງ ໄປພັກທີ່ ເມືອງໄກສອນ, ແຂວງສະຫວັນນະເຂດ | ກຕຊສ |
| 01.ເມສາ.2018 | ມື້ທີ 2 | |
| | ເດີນທາງໄປ ແຂວງອັດຕະປື | ກຕຊສ |
| 02.ເມສາ.2018 | ມື້ທີ 3 | |
| 08:30-09:30 | ເຂົ້າພົບຫົວໜ້າພະແນກ ຊສ ແຂວງອັດຕະປື | ກຕຊສ |
| 09:30-11:00 | ເດີນທາງໄປໂຄງການ (ຫ້ອງການປະຈຳພາກສະໜາມ) ທີ່ເມືອງຊານໄຊ | ຄະນະ ວິຊາການ |
| 11:00-12:00 | ຮັບຟັງການລາຍການ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການ | ຜູ້ພັດທະນາ ໂຄງການ |
| 12:00-13:00 | ຮັບປະທານອາຫານທ່ຽງ | |
| 13:00-16:30 | ເດີນທາງເຂົ້າເຂດໂຄງການເຊຂະໜານ 1 - ຊານໄຊ:<br>– ເຂດຟື້ນຟູສິ່ງແວດລ້ອມ ພາຍຫຼັງການຮື້ຖອນແຄ້ມພັກພະນັກງານ-ກຳມະກອນ ຊົ່ວຄາວ;<br>– ເຂດແຄ້ມພັກພະນັກງານ-ກຳມະກອນຖາວອນ;<br>– ເຂດອູ່ສ້ອມແປງລົດ;<br>– ສະໜາມຂີ້ເຫຍື້ອໂຄງການ;<br>– ເຂດຟື້ນຟູ ບໍ່ຫີນ, ບໍ່ດິນ;<br>– ເຂດເຂື່ອນ, ໂຮງຈັກ;<br>– ເຂດປ້ອງກັນການເຊາະເຈື່ອນ;<br>– ສະຖານີເກັບຕົວຢ່າງນ້ຳ. | ຄະນະ ວິຊາການ + ຜູ້ພັດທະນາ ໂຄງການ |
| 16:30 | ພັກຜ່ອນ ທີ່ເມືອງຊານໄຊ | |
| 03.ເມສາ.2018 | ມື້ທີ 4 | |
| 08:00-12:00 | ເດີນທາງເຂົ້າຢ້ຽມຢາມປະຊາຊົນ ບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ເຂດຈັດສັນຍົກຍ້າຍ ບ້ານສຸກສະຫວ່າງ - ດາກບູ, ບ້ານຫ້ວຍດູມ<br>- ໂອ້ລົມປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການ;<br>- ຮັບຟັງການສະເໜີຈາກປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການ. | |
| 12:00-13:00 | ຮັບປະທານອາຫານທ່ຽງ ທີ່ບ້ານຈັດສັນ - ຍົກຍ້າຍ | |
| 13:00-13:15 | - ກ່າວເປີດກອງປະຊຸມ | ປະທານ |
| 13:15-14:45 | - ສະເໜີ ກ່ຽວກັບ ຂໍ້ສະດວກ, ຂໍ້ຄົງຄ້າງ, ຂໍ້ສະເໜີ ຕໍ່ກັບສະພາບການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນໄລຍະຜ່ານມາ | ບໍລິສັດ |

| | | |
|---|---|---|
| 14:45-15:30 | - ປຶກສາຫາລືບັນຫາທີ່ພົບເຫັນໃນໄລຍະຕິດຕາມກວດກາ ຕົວຈິງພາກສະໜາມ | |
| 15:30-16:30 | ຜ່ານເນື້ອໃນບົດບັນທຶກຮ່ວມກັນ (ເຊັນບົດບັນທຶກ) | ຄະນະ<br>ວິຊາການ<br>+<br>ບໍລິສັດ |
| 16:30 | ພັກຜ່ອນ ທີ່ເມືອງຊານໄຊ | |
| 04.ເມສາ.2018 | ມື້ທີ 5 | |
| | (ຄະນະວິຊາການ ກຕຊສ ເດີນທາງຈາກອັດຕະປືໄປພັກທີ່ ແຂວງສະຫວັນນະເຂດ) | |
| 05.ເມສາ.2018 | ມື້ທີ 6 | |
| | ເດີນທາງກັບ ນະຄອນຫຼວງວຽງຈັນ | ກຕຊສ |

5. **ລາຍຊື່ຜູ້ເຂົ້າຮ່ວມ ໃນຄະນະວິຊາການຕິດຕາມກວດກາ ສິ່ງແວດລ້ອມໂຄງການ.**

ຄະນະວິຊາການ ຕິດຕາມກວດກາສິ່ງແວດລ້ອມໂຄງການ ໃນພາກສະໜາມ ຄັ້ງນີ້ ປະກອບດ້ວຍ:

**<u>ພາກສ່ວນ ກຊສ:</u>** **<u>ລວມ: 8 ທ່ານ</u>**

1. ຄະນະ ກຕຊສ 1 ທ່ານ
2. ຄະນະ ຂະແໜງ ຕພພ 1 ທ່ານ
3. ວິຊາການ ຂຕພພ 4 ທ່ານ
4. ວິຊາການ ຂະແໜງສັງລວມ 1 ທ່ານ
5. ພະນັງງານຂັບລົດ 1 ທ່ານ

**<u>ພາກສ່ວນຂະແໜງການ</u>** **<u>ລວມ: 03 ທ່ານ</u>**

1. ຕາງໜ້າ ກົມຊັບພະຍາກອນນໍ້າ, ກຊສ 1 ທ່ານ
2. ຕາງໜ້າ ກົມຊົນເຜົ່າ, ສູນກາງແນວລາວສ້າງຊາດ 1 ທ່ານ
3. ກົມທຸລະກິດພະລັງງານ, ກພບ 1 ທ່ານ

**<u>ພະແນກ ຊສ ແຂວງອັດຕະປື:</u>** **<u>ລວມ: 03 ທ່ານ</u>**

1. ຄະນະ ພະແນກ ຊສ ແຂວງ 1 ທ່ານ
2. ວິຊາການ ສິ່ງແວດລ້ອມ 1 ທ່ານ
3. ພະນັກງານຂັບລົດ 1 ທ່ານ

**<u>ຫ້ອງການ ຊສ ເມືອງຊານໄຊ</u>** **<u>ລວມ: 03 ທ່ານ</u>**

1. ຫ້ອງການ ຊສ ເມືອງ 1 ທ່ານ
2. ວິຊາການສິ່ງແວດລ້ອມ 1 ທ່ານ
3. ພະນັກງານຂັບລົດ 1 ທ່ານ

**ລວມຜູ້ເຂົ້າຮ່ວມຈາກ ພາກສ່ວນລັດຖະບານ ທັງໝົດ 17 <u>ທ່ານ</u>**

6. **ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຄະນະວິຊາການຕິດຕາມກວດກາສິ່ງແວດລ້ອມໂຄງການ.**

ຄະນະວິຊາການ ຕິດຕາມກວດກາສິ່ງແວດລ້ອມໂຄງການ ມີໜ້າທີ່ ແລະ ຄວາມຮັບຜິດຊອບດັ່ງນີ້:

- ຈັດຕັ້ງ ແລະ ເຂົ້າຮ່ວມກອງປະຊຸມປຶກສາຫາລືພ້ອມທັງລົງກວດກາພາກສະໜາມ;
- ເກັບກຳຂໍ້ມູນ ແລະ ສ້າງບົດບັນທຶກ ໃນການຕິດຕາມກວດກາ;
- ໃຫ້ຄຳແນະນຳ ແກ່ເຈົ້າຂອງໂຄງການໃນການແກ້ໄຂບັນຫາ/ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ທີ່ເກີດຂຶ້ນຈາກໂຄງການລົງທຶນ ຜ່ານການເຄື່ອນໄຫວຕິດຕາມກວດກາໃນພາກສະໜາມຄັ້ງນີ້;
- ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງກ່ອນ ຫລື ໃນໄລຍະການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມໂຄງການ;
- ສ້າງບົດລາຍງານການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມໂຄງການເພື່ອລາຍງານຕໍ່ການນຳຂອງຕົນ.

7. **ວິທີການ, ເຄື່ອງມື ແລະ ອຸປະກອນ ນຳໃຊ້ໃນການເຄື່ອນໄຫວລົງກວດກາ ສິ່ງແວດລ້ອມໂຄງການ.**

**7.1. ວິທີການຕິດຕາມກວດກາສິ່ງແວດລ້ອມໂຄງການ**

- ສັງເກດຕົວຈິງ, ເກັບ ແລະ ສັງລວມຂໍ້ມູນເພີ່ມເຕີມນຳເຈົ້າຂອງໂຄງການ;
- ໃຊ້ລາຍການກວດສອບ (checklist);
- ຖ່າຍຮູບ;
- ສ້າງບົດບັນທຶກກອງປະຊຸມ ແລະ ບົດລາຍງານການຕິດຕາມກວດກາ;
- ສຳພາດ ແລະ ປະຊຸມປຶກສາຫາລືຮ່ວມກັບ ເຈົ້າຂອງໂຄງການ, ອົງການປົກຄອງທ້ອງຖິ່ນ ແລະ ຜູ້ໄດ້ຮັບຜົນກະທົບຈາກໂຄງການ.

**7.2. ເຄື່ອງມື ແລະ ອຸປະກອນ ນຳໃຊ້ ໃນການເຄື່ອນໄຫວຕິດຕາມກວດກາ ສິ່ງແວດລ້ອມໂຄງການ**

- ກ້ອງຖ່າຍຮູບ, ແບບຟອມສຳພາດ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ;
- ເຈ້ຍ ແລະ ປຶ້ມບັນທຶກ, ເຄື່ອງພິມເອກະສານ, ມຶກ, ບິກ, ເສື້ອສະທ້ອນແສງ, ແວ່ນຕາ, ເກີບໂບກ ແລະ ອື່ນໆ;
- ອຸປະກອນນຳໃຊ້ ໃນການຕິດຕາມກວດກາ ເຊັ່ນ: GPS, ເຄື່ອງວັດແທກຄຸນນະພາບນ້ຳ...

8. ງົບປະມານລາຍຈ່າຍໃນການຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ໂຄງການໃນພາກສະໜາມ ສຳລັບ ໂຄງການເຂື່ອນໄຟຟ້າ ເຊຊະໜານ 1 ໃນຊ່ວງໄລຍະດຳເນີນງານ ທີ່ເມືອງຊານໄຊ, ແຂວງອັດຕະປື.

<u>ອັດຕາແລກປ່ຽນ 8,000/1 ໂດລາ</u>

| ລ/ດ | ເນື້ອໃນ | ຈຳນວນ | | ວັນ | ຄັ້ງ | ລາຄາ | ມູນຄ່າ | ໝາຍເຫດ |
|---|---|---|---|---|---|---|---|---|
| I | **ອັດຕາກິນ ແລະ ພັກເຊົາ ກຕຊສ** | | | | | | **16,620,000** | |
| 1 | ອັດຕາກິນ ແລະ ຄ່າພັກເຊົາ ຫົວໜ້າກອງ | 1 | ທ່ານ | 6 | ວັນ | 270,000 | 1,620,000 | |
| 2 | ອັດຕາກິນ ແລະ ຄ່າພັກເຊົາ ຄະນະຂະແໜງ,ວິຊາການ, ຂະແໜງການກ່ຽວຂ້ອງ ແລະ ພະນັກງານຂັບລົດ | 10 | ທ່ານ | 6 | ວັນ | 250,000 | 15,000,000 | |
| II | **<u>ຄ່າເດີນທາງພາກສ່ວນ ກຕຊສ</u>** | | | | | | **1,960,000** | |
| 1 | ນ້ຳມັນລົດ ໄປ-ກັບ ແຕ່ນະຄອນຫຼວງວຽງຈັນ-ແຂວງອັດຕະປື-ເມືອງຊານໄຊ-ເຂດໂຄງການ-ນະຄອນຫຼວງວຽງຈັນ (900+30+50)*2)/8)*8,000)= 1,960,000 | 1 | ຄັນ | | | 1,960,000 | 1,960,000 | |
| III | **ອັດຕາກິນ ພາກສ່ວນ ພຊສ ແຂວງອັດຕະປື** | | | | | | **1,500,000** | |
| 1 | ອັດຕາກິນ ແລະ ອັດຕາຄ່າພັກເຊົາ ພາກສ່ວນ ພຊສ ແຂວງອັດຕະປື | 3 | ທ່ານ | 2 | ວັນ | 250,000 | 1,500,000 | |
| IV | **<u>ຄ່າເດີນທາງ ພາກສ່ວນ ພຊສ ແຂວງອັດຕະປື</u>** | | | | | | **160,000** | |
| 1 | ນ້ຳມັນລົດ ໄປ-ກັບ ແຕ່ແຂວງອັດຕະປື-ເມືອງຊານໄຊ-ເຂດໂຄງການ-ແຂວງອັດຕະປື (30+50)*2)/8)*8,000)= 160,000 | 1 | ຄັນ | | | 160,000 | 160,000 | |
| V | **ອັດຕາກິນ ພາກສ່ວນ ທຊສ ເມືອງຊານໄຊ** | | | | | | **900,000** | |
| 1 | ອັດຕາກິນ ພາກສ່ວນ ທຊສ ເມືອງຊານໄຊ | 3 | ທ່ານ | 3 | ວັນ | 100,000 | 900,000 | |

| | | | | | | | | |
|---|---|---|---|---|---|---|---|---|
| VI | ຄ່າເດີນທາງພາກສ່ວນ ເມືອງຊານໄຊ | | | | | | 300,000 | |
| 1 | ນ້ຳມັນລົດ ໄປ-ກັບ ເມືອງຊານໄຊ-ເຂດໂຄງການ-ເມືອງຊານໄຊ (50*2)*3)/8)*8,000)= 300,000<br>ໝາຍເຫດ: 1 ຄັ້ງ= 2 ຖ້ຽວ ໄປ-ກັບ | 1 | ຄັນ | | | 300,000 | 300,000 | |
| VII | ບໍລິຫານ | | | | | | 27,476,000 | |
| | ຄ່າເຊົ່າລົດຂອງທີມງານ ກຕຊສ + ອາກອນ 10 % | 2 | ຄັນ | 6 | ວັນ | 2,040,500 | 24,486,000 | |
| | ຄ່າຕິດຕໍ່ປະສານງານ | | | | | 800,000 | 800,000 | |
| | ເຮັດປື້ມບົດລາຍງານ ແລະ ລ້າງຮູບ | | | | | 1,000,000 | 1,000,000 | |
| | ເງິນແຮ ແລະ ບໍລິການອື່ນໆ | | | | | 1,190,000 | 1,190,000 | |
| | ລວມກີບ: ສີ່ສິບແປດລ້ານເກົ້າແສນສິບຫົກພັນ ກີບ | | | | | | 48,916,000 | |
| | ລວມໂດລາ: ຫົກພັນໜຶ່ງຮ້ອຍສິບສີ່ ໂດລາສະຫະລັດ ແລະ ຫ້າສິບ ເຊັນ | | | | | | 6,114.50 | |

ຫົວໜ້າກອງ　　　　ຮອງຫົວໜ້າກອງ　　　　ຜູ້ກະກຽມ

ອາລຸນ ໄຊຍະວົງ　　　　ອາລິຍະສັກ ຕຸນາລົມ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ຂະແໜງພະລັງງານ ແລະ ພື້ນຖານໂຄງລ່າງ                                        ເລກທີ              /ກຕຊສ.ຂຕພພ

ນະຄອນຫຼວງວຽງຈັນ, ວັນທີ

**ຮຽນ : ທ່ານ ຫົວໜ້າ ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

**ເລື່ອງ: ຂໍລາຍງານຜົນການລົງຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ໃນໄລຍະດຳເນີນງານ ສຳລັບ ໂຄງການເຂື່ອນໄຟຟ້າເຊຊະໝານ 1 ທີ່ ເມືອງຊານໄຊ, ແຂວງອັດຕະປື ຂອງບໍລິສັດ ໄຟຟ້າເຊຊະໝານ 1 ຈຳກັດ**

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຂອງໂຄງການເຂື່ອນໄຟຟ້າ ເຊຊະໝານ 1 ສະບັບເລກທີ 075/ສນຍ.ອຊນສ, ລົງວັນທີ 14 ມັງກອນ 2008;
- ອີງຕາມ ບົດບັນທຶກ ຜົນການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມ ໂຄງການເຂື່ອນໄຟຟ້າເຊຊະໝານ 1, ຄັ້ງວັນທີ 02 ເມສາ 2018.

ຂະແໜງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂະແໜງພະລັງງານ ແລະ ພື້ນຖານໂຄງລ່າງ (ຂຕພພ) ຂໍຖືເປັນກຽດຮຽນລາຍງານມາຍັງທ່ານ ຊາບວ່າ: ໃນວັນທີ 02 ເມສາ 2018 ຄະນະວິຊາການ ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຕຊສ) ເຊິ່ງນຳພາໂດຍ ທ່ານ ອາລິຍະສັກ ຕຸນາລົມ ຮອງຫົວໜ້າ ກຕຊສ ເປັນຫົວໜ້າຄະນະ ຮ່ວມກັບ ພະແນກ ຊສ ແຂວງອັດຕະປື, ຫ້ອງການ ຊສ ເມືອງຊານໄຊ ແລະ ທ່ານ ທາງ ວຽນ ຊວນທຽນ ຜູ້ອຳນວຍການ ບໍລິສັດ ໄຟຟ້າເຊຊະໝານ 1 ລົງເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດການຄຸ້ມຄອງສິ່ງແວດລ້ອມ ໃນໄລຍະດຳເນີນງານ ຂອງໂຄງການເຂື່ອນໄຟຟ້າເຊຊະໝານ 1 ທີ່ເມືອງຊານໄຊ, ແຂວງອັດຕະປື.

ການເຄື່ອນໄຫວຕິດຕາມກວດກາຄັ້ງນີ້ ຄະນະວິຊາການໄດ້ລົງແຕ່ລະເຂດ ຂອງໂຄງການ ເຊັ່ນ: ເຂດອ່າງເກັບນ້ຳ, ເຂດທີ່ຕັ້ງຕົວເຂື່ອນ, ເຂດແຄ້ມພັກພະນັກງານ, ເຂດບໍ່ຫີນ-ເຂດບໍ່ດິນ, ເຂດໂຮງໂມ້ງຫີນ ພ້ອມເກັບຕົວຢ່າງຄຸນນະພາບນ້ຳ ແລະ ບ້ານຈັດສັນຍົກຍ້າຍ ຫຼັງຈາກນັ້ນ, ຄະນະວິຊາການໄດ້ຈັດກອງປະຊຸມປຶກສາຫາລືຮ່ວມກັບ ຄະນະຮັບຜິດຊອບຂອງໂຄງການເຂື່ອນໄຟຟ້າເຊຊະໝານ 1 ກ່ຽວກັບ ການປະຕິບັດມາດຕະການຄຸ້ມຄອງສິ່ງແວດລ້ອມ ແລະ ບັນຫາທີ່ພົບເຫັນໃນເວລາເຄື່ອນໄຫວຕິດຕາມກວດກາ ມີດັ່ງນີ້:

1. ດ້ານສິ່ງແວດລ້ອມທຳມະຊາດ:

   - ພົບເຫັນສິ່ງເສດເຫຼືອເສດເຊັ່ນ: ເຫຼັກ, ເສດໄມ້ ຖິ້ມຊະຊາຍຢູ່ເຂດແຄ້ມພັກກຳມະກອນ, ເຂດໂຮງໂມ້ງຫີນ ແລະ ເສດວັດສະດຸ ຕາມເສັ້ນທາງໃນເຂດໂຄງການ;
   - ເຂດບໍ່ດິນ, ບໍ່ຫີນ ແລະ ເຂດທີ່ສຳເລັດການກໍ່ສ້າງແລ້ວ ປະຈຸບັນນີ້ໄດ້ມີການປັບໜ້າດິນຈຳນວນໜຶ່ງແລ້ວ ແຕ່ວ່າພົບເຫັນຍັງບໍ່ທັນໄດ້ມີການປູກຕົ້ນໄມ້, ຫຍ້າ ແລະ ພືດຊະນິດອື່ນໆ, ການຟື້ນຟູສະພາບແວດລ້ອມ ໃຫ້ກັບຄືນຢູ່ສະພາບເດີມ.

2. ດ້ານສິ່ງແວດລ້ອມສັງຄົມ:

- ພົບເຫັນປະຊາຊົນບ້ານຕາດກຸ່ມຈັບຈອງທີ່ດິນໃນເຂດຈັດສັນບ້ານຫ້ວຍດູມຂອງໂຄງການເຂື່ອນໄຟຟ້າເຊຂະໜານ 1;
- ການສົ່ງອາຊີບໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບ ເປັນຕົ້ນ: ການສະໜອງລ້ຽງສັດ, ສະໜອງເມັດພັນພືດ ແລະ ອື່ນໆ ຍັງບໍ່ທັນແນະນຳເຕັກນິກໃຫ້ແກ່ປະຊາຊົນ.

3. ທັດສະນະວິຊາການ:

ຜ່ານການເຄື່ອນໄຫວຕິດຕາມກວດກາການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການເຂື່ອນໄຟຟ້າເຊຂະໜານ 1, ຂຕພພ ມີຄຳເຫັນດັ່ງນີ້:

1) ດ້ານສິ່ງແວດລ້ອມ:

- ໃຫ້ບໍລິສັດ ຕ້ອງສ້າງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນຊ່ວງໄລຍະດຳເນີນງານ (ESMMP-OP) ແລ້ວນຳສົ່ງໃຫ້ ກຊສ ພິຈາລະນາຮັບຮອງຕາມລະບຽບການ ພາຍໃນ 90 ວັນລັດຖະການ (ກໍລະນີບໍ່ທັນກັບກຳນົດເວລາ ແມ່ນຈະໄດ້ມີມາດຕະການລົງໂທດ);
- ບໍລິສັດ ຕ້ອງສ້າງແຜນຄຸ້ມຄອງອ່າງໂຕ່ງ ແລ້ວນຳສົ່ງໃຫ້ ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາຮັບຮອງຕາມລະບຽບການ;
- ບໍລິສັດ ຕ້ອງສ້າງຄຸ້ມຄອງອ່າງເກັບນ້ຳ ແລ້ວນຳສົ່ງໃຫ້ ກຊສ ພິຈາລະນາຮັບຮອງຕາມລະບຽບການ;
- ໃຫ້ບໍລິສັດ ສ້າງແຜນການຟື້ນຟູສິ່ງແວດລ້ອມເປັນຕົ້ນ: ເຂດບໍ່ດິນ, ເຂດບໍ່ຫີນ, ເຂດແຄ້ມພັກຊົ່ວຄາວ ແລະ ອື່ນໆ ໃຫ້ກັບຄືນສູ່ສະພາບທີ່ສາມາດນຳໃຊ້ໄດ້ ແລະ ມີການປູກຕົ້ນໄມ້ເຊັ່ນ: ໄມ້ຍ່າງ ແລະ ພືດປະເພດອື່ນໆທີ່ສາມາດປູກໄດ້;
- ໃຫ້ບໍລິສັດ ວ່າຈ້າງໜ່ວຍງານຕິດຕາມກວດກາເອກະລາດ (IMA) ທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ ວ່າດ້ວຍ ພັນທະທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (Schedcle 2) ໃນຂໍ້ 7.3 ໜ້າ 32.

2) ດ້ານສິ່ງແວດລ້ອມສັງຄົມ:

- ບໍລິສັດ ຕ້ອງສ້າງແຜນການຟື້ນຟູຊີວິດການເປັນຢູ່ ແລະ ລາຍຮັບຂອງປະຊາຊົນໃນເຂດຈັດສັນແລ້ວນຳສົ່ງໃຫ້ຄະນະກຳມະການຍົກຍ້າຍຈັດສັນ (RC) ຮັບຮອງຕາມລະບຽບການແລ້ວ. ບໍລິສັດຈະນຳສົ່ງ 01 ສະບັບສຳເນົາ ໃຫ້ ກຕຊສ ຮັບຊາບ;
- ໃຫ້ ບໍລິສັດ ມີການປະເມີນລາຍຮັບຂອງປະຊາຊົນທີ່ໄດ້ມີການຈັດສັນຍົກຍ້າຍໄປແລ້ວ ທຸກໆ 2 ປີ ຕາມທີ່ກຳນົດໄວ້ໃນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ ໃນຂໍ້ທີ່ 9.3.5 ໜ້າທີ່ 38 ໂດຍໃຫ້ມີຄະນະກຳມະການເຂົ້າຮ່ວມໃນການປະເມີນ ແລ້ວ ນຳສົ່ງ ກຕຊສ, ພຊສ ແຂວງອັດຕະປື ແລະ ຫຊສ ເມືອງຊານໄຊ ຮັບຊາບ.

3) ຄຳເຫັນເພີ່ມເຕີມ:

- ໃຫ້ ບໍລິສັດ ສົມທົບກັບຂະແໜງການກ່ຽວຂ້ອງເພື່ອຄຸ້ມຄອງ ແລະ ປ້ອງກັນບໍ່ໃຫ້ມີການຈູດປ່າເຮັດໄຮ່ ພ້ອມທັງໃຫ້ມີງົບປະມານໃຫ້ພາກລັດຖະບານໄດ້ລົງຊຸກຍູ້;
- ໃຫ້ບໍລິສັດ ສ້າງບົດລາຍງານຄວາມຄືບໜ້າ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການ ປະຈຳໄຕມາດ ແລະ ປະຈຳປີ ພ້ອມທັງບົດລາຍງານຜົນການວິໄຈຄຸນນະພາບນ້ຳ ແລ້ວລາຍງານໃຫ້ ກຊສ, ພຊສ ແລະ ຫຊສ ເມືອງຮັບຊາບ ແລະ ໃນກໍລະນີທີ່ເກີດເຫດສຸກເສີນ ບໍລິສັດຕ້ອງລາຍງານໃຫ້ ກຊສ ຮັບຊາບພາຍໃນ 24 ຊົ່ວໂມງ.

ທັງໝົດແມ່ນຜົນການລົງຕິດຕາມກວດກາການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການເຂື່ອນໄຟຟ້າເຊຂະໝານ 1 ແລະ ໄດ້ຄັດຕິດບົດປະກອບຄຳເຫັນສະເໜີເຖິງບໍລິສັດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຮັບຊາບ ແລະ ໃຫ້ທິດຊີ້ນຳຕາມທາງຄວນດ້ວຍ.

ຫົວໜ້າຂະແໜງ

ພູປະສິດ ພິດທະຍາພອນ

<u>ເອກະສານຄັດຕິດ</u>

- ບົດປະກອບຄຳເຫັນ;
- ຂໍ້ມູນສັງລວມຫຍໍ້ໂຄງການ;
- ລາຍການກວດສອບ ສຳລັບ ການລົງຕິດຕາມກວດກາ;
- ລາຍການກວດສອບຄຸນນະພາບນ້ຳ;
- ບົດບັນທຶກ;
- ລາຍຊື່ຜູ້ເຂົ້າຮ່ວມ.

# ແບບຟອມກວດກາການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຄງການພະລັງງານ

| | | | |
|---|---|---|---|
| ຊື່ໂຄງການ | ເຂື່ອນໄຟຟ້າເຊນ້ຳໜ່ວນ | ຜູ້ດຳເນີນການກວດກາ | ............ |
| ທີ່ຕັ້ງຂອງໂຄງການ (ສະຖານທີ່ກວດກາ) | ເມືອງ ຊຳເໜືອ | ວັນທີ,ເດືອນ,ປີ | 02 ເມສາ 2018 |
| ສະຖານທີ່ກວດກາ | ສາງເຂື່ອນໄຟຟ້າ | ເວລາຕິດຕາມ | 10 ໂມງ |

| ດ/ລ | ຫົວຂໍ້ | ການຕິດຕາມກວດກາ | | | ອະທິບາຍບັນຫາທີ່ພົບເຫັນໃນພາກສະໜາມ | ໝາຍເຫດ |
|---|---|---|---|---|---|---|
| | | ບໍ່ ປະຕິບັດ | ປະຕິບັດ ແຕ່ ບໍ່ຄົບ ຖ້ວນ | ປະຕິບັດ ຄົບຖ້ວນ | | |
| **I.** | **ພັນທະທີ່ຈະຕ້ອງປະຕິບັດ ໃນໄລຍະກໍ່ສ້າງ ແລະ ດຳເນີນງານ (CP and OP)** | | | | | |
| 1 | ແຜນຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ESMMP-CP/OP | | ✓ | | ຫົວໜ່ວຍຈັດຕັ້ງປະຕິບັດ ສັນຍາແຜນ ESMMP-OP | |
| 2 | ແຜນການຄຸ້ມຄອງອ່າງເກັບນ້ຳ (Reservoir management Plan) | | ✓ | | | |
| 3 | ແຜນຄຸ້ມຄອງອ່າງຮັບນ້ຳ Watershed management Plan | | ✓ | | | |
| 4 | ແຜນການປ່ອຍນ້ຳລົງສູ່ເຂດລຸ່ມເຂື່ອນ (Environmental flow) | | ✓ | | | |
| 5 | ແຜນອະນາໄມຊີວະມວນສານ (Biomass Cleanse Plan) | | ✓ | | | |
| 6 | ສ້າງແຜນການປູກປ່າທົດແທນ (Biodiversity Offset Plan) | | ✓ | | | |
| 7 | ແຜນຄຸ້ມຄອງເຂດລຸ່ມເຂື່ອນ (Downstream Area management Plan) | | ✓ | | | |

| | | | | | | |
|---|---|---|---|---|---|---|
| 8 | ການສ້າງແຜນຄຸ້ມຄອງສິ່ງແວດລ້ອມຕາມແລວສາຍສົ່ງ (Transmisstion Line Management Plan) | | | | | |
| 9 | ການປະສານສົມທົບ ກັບຂະແໜງການກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ການຄຸ້ມຄອງສິ່ງແວດລ້ອມ | | | ✓ | | |
| **II.** | **ການຄຸ້ມຄອງສິ່ງແວດລ້ອມ** | | | | | |
| 1 | ການຄຸ້ມຄອງການເຊາະເຈື່ອນ ແລະ ການຕົກຕະກອນ Erosion and Sediment Management Plan | | ✓ | | | |
| 2 | ການຄຸ້ມຄອງ ບໍ່ດິນ-ບໍ່ຫີນ (Pit Soil Management Plan) | ✓ | | | ຍັງບໍ່ໄດ້ສ້າງແຜນຟື້ນຟູ | |
| 3 | ການຄຸ້ມຄອງຝຸ່ນລະອອງ, ອາກາດ Air Quality Management Plan | | ✓ | | ຍັງພົບເຫັນຝຸ່ນລະອອງຢູ່ໃນເຂດໂຄງການ | |
| 4 | ການຄຸ້ມຄອງສິ່ງເສດເຫຼືອການຈາກກໍ່ສ້າງ ທີ່ເປັນອັນຕະລາຍ ແລະ ບໍ່ເປັນອັນຕະລາຍ (Solid Waste from work Management Plan) | | ✓ | | ຍັງພົບເຫັນສິ່ງເສດເຫຼືອຈາກການກໍ່ສ້າງ<br>ຍັງບໍ່ທັນມີແຜນຄຸ້ມຄອງ | |
| 5 | ການຄຸ້ມຄອງຂີ້ເຫຍື້ອ ທີ່ເປັນອັນຕະລາຍ ແລະ ບໍ່ເປັນອັນຕະລາຍ(Solid Waste Management Plan) | | ✓ | | ຍັງພົບເຫັນຂີ້ເຫຍື້ອຢູ່ຕາມຈຸດຕ່າງໆຕາມໂຄງການ | |
| 6 | ການຄຸ້ມຄອງສານເຄມີ ຈາກການກໍ່ສ້າງ Hazardous Substance Management Plan | | | | | |
| 7 | ການຄຸ້ມຄອງ ສຽງ Noise Management Plan | | | | | |
| 8 | ການຄຸ້ມຄອງ ແລະ ຕິດຕາມກວດກາຄຸນນະພາບນ້ຳ Water Quality and Runoff Management Plan | | | | | |
| 9 | ການຄຸ້ມຄອງ ຫ້ອງການ, ແຄ້ມພັກ, ເຮືອນຈັກ, ເຂື່ອນ ແລະ ເຂດອື່ນໆຂອງໂຄງການ | | | ✓ | | |
| 10 | ແຜນຟື້ນຟູສິ່ງແວດລ້ອມໃນເຂດກໍ່ສ້າງ, ເຂດທີ່ຖືກບຸກເບີກ ແລະ ເຂດບໍ່ດິນ, ບໍ່ຫີນ ທີ່ສຳເລັດແລ້ວ Rehabilitation and Re-vegetable Management Plan | ✓ | | | ຍັງບໍ່ມີແຜນຟື້ນຟູ | |
| 11 | ການຄຸ້ມຄອງ ຄວາມປອດໄພ ໃນເຂດກໍ່ສ້າງຕ່າງໆ (ແຈ້ງເຕືອນ, ປ້າຍເຕືອນອັນຕະລາຍ) | | ✓ | | | |

| | | | | | | |
|---|---|---|---|---|---|---|
| 12 | ການຄຸ້ມຄອງ ສຸຂະອະນາໄມ ແລະ ທິວທັດ ຄວາມສວຍງາມ | ✓ | | | ຢູ່ໃນຊ່ວງກໍ່ສ້າງ ແລະ ຍັງບໍ່ໄດ້ຟື້ນຟູ | |
| 13 | ການຄຸ້ມຄອງສິ່ງແວດລ້ອມເຂດທີ່ຕັ້ງເຂື່ອນ | | ✓ | | | |
| 14 | ການຄຸ້ມຄອງສິ່ງແວດລ້ອມ ເຂດລຸ່ມເຂື່ອນ | | ✓ | | | |
| 15 | ການຕອບໂຕ້ກໍລະນີເກີດເຫດການສຸກເສີນ | | | | | |
| **III.** | **ການຄຸ້ມຄອງສິ່ງແວດລ້ອມດ້ານສັງຄົມ** | | | | | |
| 1 | ການຄຸ້ມຄອງ ສຸຂະພາບ ແລະ ຄວາມປອດໄພ ຂອງຊຸມຊົນ | | ✓ | | | |
| 2 | ການຄຸ້ມຄອງພະຍາດຕິດຕໍ່ ຂອງຊຸມຊົນ ແລະ ພະນັກງານຂອງໂຄງການ | | ✓ | | | |
| 3 | ການຄຸ້ມຄອງການຈໍລະຈອນ, ການເຂົ້າ-ອອກ ພາຫະນະຂອງໂຄງການ ຜ່ານຊຸມຊົນ | | ✓ | | | |
| 4 | ການຄຸ້ມຄອງແຮງງານ, ການຫລັ່ງໄຫຼເຂົ້າມາຂອງຄົນ | | ✓ | | | |
| 5 | ການຄຸ້ມຄອງວັດທະນາທຳ ແລະ ຄວາມເຊື່ອຖື | | | | | |
| 6 | ການປັບປຸງໂຄງລ່າງພື້ນຖານ ໃນຊຸມຊົນທີ່ຢູ່ໃກ້ຄຽງ | | | | | |
| 7 | ການນຳໃຊ້ດິນ ຂອງປະຊາຊົນ ແລະ ຂອງໂຄງການ | | | | | |
| 8 | ການສົ່ງເສີມອາຊີບໃຫ້ປະຊາຊົນ, ວ່າຈ້າງງານ | | ✓ | | | |
| 9 | ການຊ່ວຍເຫຼືອໄລຍະຂ້າມຜ່ານ | | ✓ | | | |
| 10 | ການຊ່ວຍເຫລືອທາງດ້ານສັງຄົມອື່ນໆ(ຖ້າມີ) | | | | | |
| 11 | ການສູນເສຍໂອກາດເຂົ້າເຖິງແຫ່ງທຳມາຫາກິນ, ການເສຍລາຍຮັບ | | | | | |

| | | | | | | |
|---|---|---|---|---|---|---|
| 12 | ການເຜີຍແຜ່ຂໍ້ມູນ, ການຝຶກອົບຮົມ ແລະ ປູກຈິດສຳນຶກ | | ✓ | | | |
| 13 | ການມີສ່ວນຮ່ວມຂອງມວນຊົນ ຂອງໃນວຽກງານທີ່ກ່ຽວຂ້ອງ ທາງດ້ານສັງຄົມ | | ✓ | | | |
| 14 | ການປະສານສົມທົບກັບຂະແໜງການທ້ອງຖິ່ນ ແຂວງ, ເມືອງ ແລະ ປະຊາຊົນທີ່ຖືກກະທົບ | | | ✓ | | |
| 15 | ການແກ້ໄຂຄໍາຮ້ອງຟ້ອງ ຮ້ອງທຸກ | | | | | |

**ຜູ້ຢັ້ງຢືນ**

**ຜູ້ກວດກາ**

# ແບບຟອມການຕິດຕາມກວດກາຄຸນນະພາບນ້ຳ:

| | | | | |
|---|---|---|---|---|
| ຊື່ໂຄງການ: ເຂື່ອນໄຟຟ້າເຊຊະໝານ 1 | | | | |
| ວັນທີ: 02/04/2018 | | ເວລາ: 11:00 ໂມງ | | |
| ຜູ້ວັດແທກ | | | | |
| ສະພາບອາກາດ(ຂີດອ້ອມເອົາ)<br>Weather Conditions (circle) | ທ້ອງຟ້າ(Sky):<br>□ ປອດໂປ່ງ(Clear)<br>□ ມືດຄຶ້ມ(Cloudy) | ຝົນ(Rain):<br>□ ບໍ່ມີຝົນ (None)<br>□ ຝົນຝອຍ (Light)<br>□ ຝົນແຮງ (Heavy) | ອຸນຫະພູມ(Temp):<br>< 20 20-30 < 30 | |
| ສະຖານທີ່: ຕົວເຂື່ອນໄຟຟ້າ | | | | |
| ຈຸດທີ 1 ເທິງເຂື່ອນ | ຕົວວັດແທກ | ຫົວໜ່ວຍ | ຄ່າວັດແທກ | |
| | pH | (unit) | 07.32 | |
| | Temp | °C | 27.30 | |
| | EC | (mS/cm) | 0270 | |
| | TDS | (mg/l) | 0175 | |
| | SSG | (st) | 00.0 | |
| | Salinity | (PSU) | 00.01 | |
| | DO | (mg/l) | 06.95 | |
| | ORP | (mV) | 0094.1 | |
| ຈຸດທີ 2 ກ້ອງລຸ່ມເຂື່ອນ | ຕົວວັດແທກ | ຫົວໜ່ວຍ | ຄ່າວັດແທກ | |
| | pH | (unit) | 06.92 | |
| | Temp | °C | 26.45 | |
| | EC | (mS/cm) | 0083 | |
| | TDS | (mg/l) | 0053 | |
| | SSG | (st) | 00.0 | |
| | Salinity | (PSU) | 00.02 | |
| | DO | (mg/l) | 04.13 | |
| | ORP | (mV) | 0074.2 | |
| ຄຳເຫັນວິຊາການ | | | | |

ຜູ້ຢັ້ງຢືນ

ຜູ້ວັດແທກ

# ເອກະສານຄັດຕິດ

# ເອກະສານຄັດຕິດ 1

ບົດບັນທຶກການຕິດຕາມກວດກາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# <u>ບົດບັນທຶກ</u>

## ການລົງຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການເຂື່ອນໄຟຟ້າ ເຊຂະໜານ 1 ແລະ ເຊຂະ ໜານຊານໄຊ ຄັ້ງວັນທີ 02 ເມສາ 2018 ທີ່ຫ້ອງປະຊຸມ ຂອງບໍລິສັດ ໄຟຟ້າ ເຊຂະໜານ 1ຈຳກັດ ເມືອງ ຊານໄຊ ແຂວງອັດຕະປື

ໃນວັນທີ 02 ເມສາ 2018 ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຕຊສ) ໄດ້ສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງອັດຕະປື, ຫ້ອງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມເມືອງຊານໄຊ ແລະ ບໍລິສັດ ໄຟຟ້າ ເຊຂະໜານ 1 ຈຳກັດ ລົງຕິດຕາມກວດການ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ພາກສະໜາມຕົວຈິງຂອງໂຄງການ ເຂື່ອນໄຟຟ້າຂະໜານ 1 ແລະ ເຊຂະໜານ ຊານໄຊ (ລາຍຊື່ຜູ້ເຂົ້າຮ່ວມໄດ້ຄັດຕິດມາພ້ອມນີ້), ຈາກນັ້ນບັນດາຝ່າຍກ່ຽວຂ້ອງກໍ່ໄດ້ມີການປະຊຸມປຶກສາຫາລືຮ່ວມກັນ ແລະ ໄດ້ຕົກລົງເຫັນດີເປັນເອກະພາບກັນ ດັ່ງລຸ່ມນີ້:

1. ບໍລິສັດ ຕ້ອງສ້າງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນຊ່ວງໄລຍະດຳເນີນງານ (ESMMP-OP) ແລ້ວນຳສົ່ງໃຫ້ ກຊສ ພິຈາລະນາຮັບຮອງຕາມລະບຽບການ ພາຍໃນ 90 ວັນລັດຖະການ (ກໍລະນີບໍ່ທັນກັບກຳນົດເວລາ ແມ່ນຈະໄດ້ມີມາດຕະການລົງໂທດ);
2. ບໍລິສັດ ຕ້ອງສ້າງແຜນຄຸ້ມຄອງອ່າງໂຕ່ງ ແລ້ວນຳສົ່ງໃຫ້ ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາຮັບຮອງຕາມລະບຽບການ;
3. ໃຫ້ ບໍລິສັດ ສ້າງແຜນການຟື້ນຟູສິ່ງແວດລ້ອມເປັນຕົ້ນ: ເຂດບໍ່ດິນ, ເຂດບໍ່ຫີນ, ເຂດແຄ້ມພັກຊົ່ວຄາວ ແລະ ອື່ນໆ ໃຫ້ກັບຄືນສູ່ສະພາບທີ່ສາມາດນຳໃຊ້ໄດ້ ແລະ ມີການປູກຕົ້ນໄມ້ເຊັ່ນ: ໄມ້ຍ່າງ ແລະ ພືດປະເພດອື່ນໆທີ່ສາມາດປູກໄດ້;
4. ບໍລິສັດ ຕ້ອງສ້າງຄຸ້ມຄອງອ່າງເກັບນ້ຳ ແລ້ວນຳສົ່ງໃຫ້ ກຊສ ພິຈາລະນາຮັບຮອງຕາມລະບຽບການ;
5. ບໍລິສັດ ຕ້ອງສ້າງແຜນການຟື້ນຟູຊີວິດການເປັນຢູ່ ແລະ ລາຍຮັບຂອງປະຊາຊົນໃນເຂດຈັດສັນແລ້ວນຳສົ່ງໃຫ້ຄະນະກຳມະການຍົກຍ້າຍຈັດສັນ (RC) ຮັບຮອງຕາມລະບຽບການແລ້ວ. ບໍລິສັດຈະນຳສົ່ງ 01 ສະບັບສຳເນົາໃຫ້ ກຕຊສ ຮັບຊາບ;
6. ໃຫ້ ບໍລິສັດ ມີການປະເມີນລາຍຮັບຂອງປະຊາຊົນທີ່ໄດ້ມີການຈັດສັນຍົກຍ້າຍໄປແລ້ວ ທຸກໆ 2 ປີ ຕາມທີ່ກຳນົດໄວ້ໃນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ ໃນຂໍ້ທີ່ 9.3.5 ໜ້າທີ່ 38 ໂດຍໃຫ້ມີຄະນະກຳມະການເຂົ້າຮ່ວມໃນການປະເມີນ ແລ້ວ ນຳສົ່ງ ກຕຊສ, ພຊສ ແຂວງອັດຕະປື ແລະ ຫຊສ ເມືອງຊານໄຊ ຮັບຊາບ;

7. ໃຫ້ ບໍລິສັດ ສົມທົບກັບຂະແໜງການກ່ຽວຂ້ອງເພື່ອຄຸ້ມຄອງ ແລະ ປ້ອງກັນບໍ່ໃຫ້ມີການຈູດປ່າເຮັດໄຮ່ ພ້ອມທັງໃຫ້ມີງົບປະມານໃຫ້ພາກລັດຖະບານໄດ້ລົງຊຸກຍູ້.

❖ ຂໍ້ສະເໜີຂອງ ບໍລິສັດ ໄຟຟ້າເຊຂະໜານ 1 ຈຳກັດ

1. ສະເໜີໃຫ້ຂະແໜງການກ່ຽວຂ້ອງຂັ້ນທ້ອງຖິ່ນແລະສູນກາງ ໃນການລົງແກ້ໄຂບັນຫາປະຊາຊົນບ້ານຕາດ ກຸ່ມຈັບຈ່ອງທີ່ດິນໃນເຂດຈັດສັນບ້ານຫ້ວຍດູມຂອງໂຄງການເຂື່ອນໄຟຟ້າເຊຂະໜານ 1;
2. ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ ຄົ້ນຄວ້າອອກໃບຕາດິນປູກສ້າງ ແລະ ດິນກະສິກຳໃຫ້ປະຊາຊົນເຂດຈັດສັນບ້ານສຸກສະຫວ່າງ-ດັກບູ ທີ່ໄດ້ຮັບຜົນກະທົບຕາມການແບ່ງຂອງບໍລິສັດ;
3. ສະເໜີໃຫ້ສູນສົ່ງເສີມກະສິກຳ ແລະ ການປະມົງໃນເຂດຈັດສັນບ້ານສຸກສະຫວ່າງ-ດັກບູ ປະຕິບັດການປູກຝັງຕາມແຜນການທີ່ໄດ້ຮັບຮອງ ແລະ ແນະນຳເຕັກນິກໃຫ້ແກ່ປະຊາຊົນ.
4. ສະເໜີ ໃຫ້ພາກສ່ວນລັດສືບຕໍ່ ຊ່ວຍສະໜັບສະໜູນ ບໍລິສັດ ໃນການຈັດຕັ້ງປະຕິບັດວຽກງານພື້ນຟູຊີວິດການເປັນຢູ່ໃຫ້ສຳເລັດຕາມແຜນທີ່ກຳນົດໄວ້.

ສະນັ້ນ, ທັງສອງຝ່າຍຈຶ່ງໄດ້ສ້າງບົດບັນທຶກສະບັບນີ້ໄວ້ເພື່ອເປັນຫຼັກຖານ ແລະ ເປັນບ່ອນອີງໃນການຕິດຕາມກວດກາຂອງພາກລັດຖະບານ ແລະ ລາຍງານການນຳ ກຊສ ເພື່ອຂໍທິດຊີ້ນຳຕາມລຳດັບ.

ທີ່ ອັດຕະປື, ວັນທີ 02 ເມສາ 2018

**ຜູ້ບັນທຶກ**

ພຸດທະສັກ ເຂັມມະລາ

**ບໍລິສັດ ໄຟຟ້າ ເຊຂະໜານ 1 ຈຳກັດ**

GIÁM ĐỐC

*Nguyễn Xuân Hiến*

**ຫຊສ ເມືອງຊານໄຊ**

ສຸວັນສິນ ວິລະພົນ

**ຮອງຫົວໜ້າ ພຊສ ແຂວງອັດຕະປື**

ສຸກວິໄລ ພອນສາລະແສນ

**ຮອງຫົວໜ້າ ກຕຊສ**

ອາລິຍະສັກ ຕຸນາລົມ

# ເອກະສານຄັດຕິດ 2

## ຕາຕະລາງເວລາ, ລາຍຊື່ຜູ້ເຂົ້າຮ່ວມ

4. ຕາຕະລາງເວລາ ການເຄື່ອນໄຫວຕິດຕາມກວດກາ

| ວັນ ແລະ ເວລາ | ລາຍລະອຽດ | ໝາຍເຫດ |
|---|---|---|
| 31.ມີນາ.2018 | ມື້ທີ 1 | |
| | ເດີນທາງຈາກ ນະຄອນຫຼວງ ໄປພັກທີ່ ເມືອງໄກສອນ, ແຂວງສະຫວັນນະເຂດ | ກຕຊສ |
| 01.ເມສາ.2018 | ມື້ທີ 2 | |
| | ເດີນທາງໄປ ແຂວງອັດຕະປື | ກຕຊສ |
| 02.ເມສາ.2018 | ມື້ທີ 3 | |
| 08:30-09:30 | ເຂົ້າພົບຫົວໜ້າພະແນກ ຊສ ແຂວງອັດຕະປື | ກຕຊສ |
| 09:30-11:00 | ເດີນທາງໄປໂຄງການ (ຫ້ອງການປະຈໍາພາກສະໜາມ) ທີ່ເມືອງຊານໄຊ | ຄະນະ ວິຊາການ |
| 11:00-12:00 | ຮັບຟັງການລາຍການ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ຂອງໂຄງການ | ຜູ້ພັດທະນາ ໂຄງການ |
| 12:00-13:00 | ຮັບປະທານອາຫານທ່ຽງ | |
| 13:00-16:30 | ເດີນທາງເຂົ້າເຂດໂຄງການເຊຊະໜານ 1 - ຊານໄຊ:<br>– ເຂດຟື້ນຟູສິ່ງແວດລ້ອມ ພາຍຫຼັງການຮື້ຖອນແຄ້ມພັກພະນັກງານ-ກໍາມະກອນ ຊົ່ວຄາວ;<br>– ເຂດແຄ້ມພັກພະນັກງານ-ກໍາມະກອນຖາວອນ;<br>– ເຂດອູ່ສ້ອມແປງລົດ;<br>– ສະໜາມຂີ້ເຫຍື້ອໂຄງການ;<br>– ເຂດຟື້ນຟູ ບໍ່ຫີນ, ບໍ່ດິນ;<br>– ເຂດເຂື່ອນ, ໂຮງຈັກ;<br>– ເຂດປ້ອງກັນການເຊາະເຈື່ອນ;<br>– ສະຖານີເກັບຕົວຢ່າງນໍ້າ. | ຄະນະ ວິຊາການ + ຜູ້ພັດທະນາ ໂຄງການ |
| 16:30 | ພັກຜ່ອນ ທີ່ເມືອງຊານໄຊ | |
| 03.ເມສາ.2018 | ມື້ທີ 4 | |
| 08:00-12:00 | ເດີນທາງເຂົ້າຢ້ຽມຢາມປະຊາຊົນ ບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ເຂດຈັດສັນຍົກຍ້າຍ ບ້ານສຸກສະຫວ່າງ - ດາກບຸ, ບ້ານຫ້ວຍດູມ<br>- ໂອ້ລົມປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການ;<br>- ຮັບຟັງການສະເໜີຈາກປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການ. | |
| 12:00-13:00 | ຮັບປະທານອາຫານທ່ຽງ ທີ່ບ້ານຈັດສັນ - ຍົກຍ້າຍ | |
| 13:00-13:15 | - ກ່າວເປີດກອງປະຊຸມ | ປະທານ |
| 13:15-14:45 | - ສະເໜີ ກ່ຽວກັບ ຂໍ້ສະດວກ, ຂໍ້ຄົງຄ້າງ, ຂໍ້ສະເໜີ ຕໍ່ກັບສະພາບການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ໃນໄລຍະຜ່ານມາ | ບໍລິສັດ |

| | | |
|---|---|---|
| 14:45-15:30 | - ປຶກສາຫາລືບັນຫາທີ່ພົບເຫັນໃນໄລຍະຕິດຕາມກວດກາ ຕົວຈິງພາກສະໜາມ | |
| 15:30-16:30 | ຜ່ານເນື້ອໃນບົດບັນທຶກຮ່ວມກັນ (ເຊັນບົດບັນທຶກ) | ຄະນະວິຊາການ + ບໍລິສັດ |
| 16:30 | ພັກຜ່ອນ ທີ່ເມືອງຊານໄຊ | |
| *04.ເມສາ.2018* | ມື້ທີ 5 | |
| | (ຄະນະວິຊາການ ກຕຊສ ເດີນທາງຈາກອັດຕະປືໄປພັກທີ່ ແຂວງສະຫວັນນະເຂດ) | |
| *05.ເມສາ.2018* | ມື້ທີ 6 | |
| | ເດີນທາງກັບ ນະຄອນຫຼວງວຽງຈັນ | ກຕຊສ |

5. **ລາຍຊື່ຜູ້ເຂົ້າຮ່ວມ ໃນຄະນະວິຊາການຕິດຕາມກວດກາ ສິ່ງແວດລ້ອມໂຄງການ.**

ຄະນະວິຊາການ ຕິດຕາມກວດກາສິ່ງແວດລ້ອມໂຄງການ ໃນພາກສະໜາມ ຄັ້ງນີ້ ປະກອບດ້ວຍ:

<u>ພາກສ່ວນ ກຊສ:</u> <u>ລວມ: 8 ທ່ານ</u>

1. ຄະນະ ກຕຊສ 1 ທ່ານ
2. ຄະນະ ຂະແໜງ ຕພພ 1 ທ່ານ
3. ວິຊາການ ຂຕພພ 4 ທ່ານ
4. ວິຊາການ ຂະແໜງສັງລວມ 1 ທ່ານ
5. ພະນັງງານຂັບລົດ 1 ທ່ານ

<u>ພາກສ່ວນຂະແໜງການ</u> <u>ລວມ: 03 ທ່ານ</u>

1. ຕາງໜ້າ ກົມຊັບພະຍາກອນນໍ້າ, ກຊສ 1 ທ່ານ
2. ຕາງໜ້າ ກົມຊົນເຜົ່າ, ສູນກາງແນວລາວສ້າງຊາດ 1 ທ່ານ
3. ກົມທຸລະກິດພະລັງງານ, ກພບ 1 ທ່ານ

<u>ພະແນກ ຊສ ແຂວງອັດຕະປື:</u> <u>ລວມ: 03 ທ່ານ</u>

1. ຄະນະ ພະແນກ ຊສ ແຂວງ 1 ທ່ານ
2. ວິຊາການ ສິ່ງແວດລ້ອມ 1 ທ່ານ
3. ພະນັກງານຂັບລົດ 1 ທ່ານ

<u>ຫ້ອງການ ຊສ ເມືອງຊານໄຊ</u> <u>ລວມ: 03 ທ່ານ</u>

1. ຫ້ອງການ ຊສ ເມືອງ 1 ທ່ານ
2. ວິຊາການສິ່ງແວດລ້ອມ 1 ທ່ານ
3. ພະນັກງານຂັບລົດ 1 ທ່ານ

ລວມຜູ້ເຂົ້າຮ່ວມຈາກ ພາກສ່ວນລັດຖະບານ ທັງໝົດ 17 ທ່ານ

แผนการเคื่อนไຫວ ຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນພາກສະໜາມ ສາລັບ ໂຄງການໄຟຟ້ານ້ຳຕົກ ເຊະໜາມ 1 ໃນຊວງດຳເນີນງານ ທີ່ເມືອງຊານໄຊ, ແຂວງ ອັດຕະປື ໃນວັນທີ 31 ມີນາ - 05 ເມສາ 2018

ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

**ລາຍຊື່ຜູ້ເຂົ້າຮ່ວມ**

1. ພາກສ່ວນ: ກຕຊສ

| ລ/ດ | ຊື່ ແລະ ນາມສະກຸນ | ພາກສ່ວນ | ຕຳແໜ່ງ | ເບີໂທ | ລາຍເຊັນ |
|---|---|---|---|---|---|
| 1 | ທ່ານ ອາລີຍາສັກ ຕຸນາລົມ | ກຕຊສ | ຮອງຫົວໜ້າ ກຕຊສ | 020 22449777 | |
| 2 | ທ່ານ ພູປະສີ ພິດທະຍາພອນ | ກຕຊສ | ຮອງຫົວໜ້າ ຂຕພພ | 020 96960444 | |
| 3 | ທ່ານ ວຽງວິໄລ ທຳມະລັງສີ | ກຕຊສ | ວິຊາການ | 020 23553965 | |
| 4 | ທ່ານ ສຸລິດ ສະລິດທິລາດ | ກຕຊສ | ວິຊາການ | 020 99793376 | |
| 5 | ທ່ານ ມະໂນີໃໝ່ ຊິນມາລາ | ກຕຊສ | ວິຊາການ | 020 97312453 | |
| 6 | ທ່ານ ວິໄລພອນ ບຸນທິງ | ກຕຊສ | ວິຊາການ | 020 28261855 | |
| 7 | ທ່ານ ສິນທະວອນ ຕາມະນີວົງ | ກຕຊສ | ວິຊາການ | 020 55567812 | |

| | | | | | |
|---|---|---|---|---|---|
| 8 | ທ່ານ | ກົມຊັບພະຍາກອນນ້ຳ | | | |
| 9 | ທ່ານ ນ. ແພງດີ ວິໄລວົງ | ກົມຊົນເຜົ່າ, ສູນກາງແນວລາວສ້າງຊາດ | 77453429 | ວິໄລພ | Phang |
| 10 | ທ່ານ ທ. | ກົມທຸລະກິດພະລັງງານ, ກພບ | | | |
| 11 | ທ່ານ ທ. ພອນເພັດ | ພະນັກງານຂັບລົດ | 02091111290 | | [signature] |

ວັນທີ ເມສາ 2018

**ຜູ້ບັນທຶກ**

[signature]

ສົມພະອອນ

ແຜນການເຄື່ອນໄຫວ ຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນພາກສະໜາມ ສາລັບ ໂຄງການໄຟຟ້ານ້ຳຕົກ ເຊຊະໜາມ 1 ໃນຊວງດຳເນີນງານ ທີ່ເມືອງຊານໄຊ, ແຂວງ ອັດຕະປື ໃນວັນທີ 31 ມີນາ - 05 ເມສາ 2018

ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

## ລາຍຊື່ຜູ້ເຂົ້າຮ່ວມ

1. ພາກສ່ວນ: ພຊສ ແຂວງອັນຕະປື.

| ລ/ດ | ຊື່ ແລະ ນາມສະກຸນ | ພາກສ່ວນ | ຕຳແໜ່ງ | ເບີໂທ | ລາຍເຊັນ |
|---|---|---|---|---|---|
| 1 | ທ່ານ ສຸກໄລ ພອນສາຣະແສງ | ພຊສແຂວງອັດຕະປື | ຮອງ ຫົວໜ້າ ພຊສ | 22294783 | |
| 2 | ທ່ານ ທ-ດາວສີ ພົງສະຫວັດ | ພຊສແຂວງອັດຕະປື | ວິຊາການ | 95524758 | |
| 3 | ທ່ານ ທັດພະຈັນ ບົວງໃລ | ພຊສແຂວງອັດຕະປື | ພະນັກງານຂັບລົດ | 22900308 | |

ວັນທີ 02 ເມສາ 2018

ຜູ້ບັນທຶກ

ສົມພາ-ວອນ

ແຜນການເຄື່ອນໄຫວ ຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນພາກສະໜາມ ສາລັບ ໂຄງການໄຟຟ້ານ້ຳຕົກ ເຊຂະໜານ 1 ໃນຊວງດຳເນີນງານ ທີ່ເມືອງຊານໄຊ, ແຂວງ ອັດຕະປື ໃນວັນທີ 31 ມີນາ - 05 ເມສາ 2018

ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

**ລາຍຊື່ຜູ້ເຂົ້າຮ່ວມ**

1. ພາກສ່ວນ: ຫ້ອງການ ຊສ ເມືອງຊານໄຊ.

| ລ/ດ | ຊື່ ແລະ ນາມສະກຸນ | ພາກສ່ວນ | ຕຳແໜ່ງ | ເບີໂທ | ລາຍເຊັນ |
|---|---|---|---|---|---|
| 1 | ທ່ານ ບຸນຍົງ. [illegible] | ຫຊສ ເມືອງຊານໄຊ | ~~ຫົວໜ້າ ຫຊສ~~ [illegible] | 98450516 | [signature] |
| 2 | ທ່ານ [illegible] | ຫຊສ ເມືອງຊານໄຊ | ວິຊາການ | 56233517 | [signature] |
| 3 | ທ່ານ ສີວອນ [illegible] | ຫຊສ ເມືອງຊານໄຊ | ຂັບລົດ | 54059924 | [signature] |

ວັນທີ 02 ເມສາ 2018

ຜູ້ບັນທຶກ

[signature]

[illegible]

**ພາກສ່ວນ ບໍລິສັດ ໄຟຟ້າເຊຂະໜານ 1 ຈຳກັດ**

| ລ/ດ | ຊື່ ແລະ ນາມສະກຸນ<br>Name and surname | ມາຈາກພາກສ່ວນ<br>Department/company | ຕຳແໜ່ງ<br>position | ເບີໂທ<br>Telephone | ລາຍເຊັນ<br>Signature |
|---|---|---|---|---|---|
| 1. | ທ່ານ Nguyen Xuan Hien | XKM1 | ຜູ້ອຳນວຍການ | 98832268 | |
| 2. | ທ່ານ Nguyễn Ngoc Anh | XKM1 | ຫົວໜ້າ ສລວ | | |
| 3. | ທ່ານ Le Van | XKM1 | ວິຊາການ | 98018686 | |
| 4. | ທ່ານ | | | | |
| 5. | ທ່ານ | | | | |

ຜູ້ບັນທຶກ

ສົມພາວອນ

# ເອກະສານຄັດຕິດ 3

## ຮູບພາບການເຄື່ອນໄຫວໃນພື້ນທີ່ເຂດໂຄງການ







ຄະນະທີມງານຕິດຕາມກວດກາປຶກສາຫາລື ກ່ຽວກັບ ເຂື່ອນໄຟຟ້າ ຊານໄຊ





ຄະນະທີມງານລົງກວດກາເຂດອ່າງເກັບນ້ຳ ແລະ ເຂື່ອນຊານໄຊ







ຈຸດເຂດບ້ານຈັດສັນຍົກຍ້າຍ







ຄະນະທີມງານລົງກວດກາເຂດ ຊົນລະປະທານ







ເຂດສູນກະສິກຳ ແລະ ການປະມົງ








ເຂດເຂື່ອນ ແລະ ອ່າງເກັບນ້ຳຂອງເຊກະໝານ 1







ເຂດວັດແທກຄຸນນະພາບນ້ຳຢູ່ເທິງເຂື່ອນ ແລະ ກ້ອງລຸ່ມເຂື່ອນ







ຄະນະທີມງານຂອງພາກລັດ ແລະ ບໍລິສັດ ໄຟຟ້າເຊຊະໝານ 1 ຈຳກັດ ປະຊຸມປຶກສາຫາລື ແລະ ເຮັດບົດບັນທຶກຮ່ວມກັນ ກ່ຽວກັບ ຜົນການລົງຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການເຂື່ອນໄຟຟ້າເຊຊະໝານ 1 ເພື່ອ ແນະນຳໃຫ້ບໍລິສັດ ເອົາໃຈໃສ່ໃນການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃຫ້ດີຂຶ້ນເລື້ອຍໆ.

ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ,
ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ